ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 562/ລບ
ນະຄອນຫຼວງວຽງຈັນ, ວັນທີ 06.11.2020.

# ດຳລັດ
# ວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ໜັງສືສະເໜີ ຂອງກະຊວງຍຸຕິທຳ ສະບັບເລກທີ 1109/ກຍ, ລົງວັນທີ 30 ກັນຍາ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ດຳເນີນໄປຢ່າງເປັນລະບົບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ເຮັດໃຫ້ພົນລະເມືອງ ຮັບຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງ; ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ; ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳ.

**ມາດຕາ 2 ການໂຄສະນາເຜີຍແຜ່ນິຕິກຳ**

ການໂຄສະນາເຜີຍແຜ່ນິຕິກຳ ແມ່ນ ການອະທິບາຍ, ຊີ້ແຈງ, ແນະນຳ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບເນື້ອໃນຂອງ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ລວມທັງສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໂດຍຜ່ານຫຼາຍຮູບການ, ວິທີການ ໃຫ້ແກ່ພົນລະເມືອງໄດ້ຮັບຮູ້, ເຂົ້າໃຈ ແລະ ປະຕິບັດ ຢ່າງເຂັ້ມງວດ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນິຕິກຳ** ໝາຍເຖິງ ລະບົບນິຕິກຳທີ່ມີຜົນບັງຄັບທົ່ວໄປ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ ຊຶ່ງປະກອບດ້ວຍ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ລວມທັງສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. **ນິຕິກຳໃຕ້ກົດໝາຍ** ໝາຍເຖິງ ລະບຽບການ ຊຶ່ງປະກອບດ້ວຍ ມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດຂອງລັດຖະບານ, ມະຕິຂອງລັດຖະບານ, ຂໍ້ຕົກລົງ, ຄຳສັ່ງ ຂອງນາຍົກລັດຖະມົນຕີ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງລັດຖະມົນຕີ, ຫົວໜ້າອົງການ ທີ່ຂຶ້ນກັບລັດຖະບານ, ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຂອງຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ, ກົດລະບຽບຂອງບ້ານ;
3. **ອົງການ** ໝາຍເຖິງ ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສານປະຊາຊົນ, ອົງການໄອຍະການປະຊາຊົນ;
4. **ພົນລະເມືອງ** ໝາຍເຖິງ ຄົນລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໄສ ແລະ ດຳລົງຊີວິດ ຢູ່ ສປປ ລາວ;
5. **ສື່ສິ່ງພິມນິຕິກຳ** ໝາຍເຖິງ ສື່ໂຄສະນານິຕິກຳ ທີ່ເປັນແຜ່ນເຈ້ຍ ທີ່ບັນຈຸຂໍ້ມູນ ຂ່າວສານ ດ້ວຍຕົວໜັງສື ຫຼື ຮູບພາບ ໂດຍມີຊື່ສະເພາະ ເປັນຕົ້ນ ໜັງສືພິມກົດໝາຍ, ວາລະສານກົດໝາຍ, ຈົດໝາຍເຫດທາງລັດຖະການ, ແຜ່ນພັບ ແລະ ອື່ນໆ;
6. **ສື່ເອເລັກໂຕຣນິກ** ໝາຍເຖິງ ສື່ໂຄສະນາດ້ວຍການສ້າງເປັນລາຍການວິທະຍຸ, ໂທລະພາບ, ໂທລະໂຄ່ງ ແລະ ສື່ແບບໃໝ່ ຫຼື ລາຍການອິນເຕີເນັດປະເພດຕ່າງໆ ຊຶ່ງກະຈາຍອອກຜ່ານເຄື່ອງສົ່ງທາງສາຍ, ທາງອາກາດ ຫຼື ຄື້ນຄວາມຖີ່;
7. **ສື່ແບບໃໝ່** ໝາຍເຖິງ ສື່ໂຄສະນາປະເພດໜຶ່ງຂອງສື່ເອເລັກໂຕຣນິກ ທີ່ສາມາດສື່ສານໄດ້ສອງລວງ ດ້ວຍການນຳໃຊ້ເຕັກໂນໂລຊີສື່ສານທີ່ທັນສະໄໝ ໃນການສົ່ງຂໍ້ມູນ ຂ່າວສານ ເປັນຕົວອັກສອນ, ພາບ ແລະ ສຽງ ຜ່ານລະບົບເຄືອຄ່າຍອິນເຕີເນັດ ເຊັ່ນ ເຟສບຸກ, ຢູທູບ, ທະວິດເຕີ, ບະລອກ, ແອັບ ແລະ ອື່ນໆ;
8. **ຕູ້ປຶ້ມກົດໝາຍປະຈຳບ້ານ** ໝາຍເຖິງ ຕູ້ທີ່ທ້ອນໂຮມເກັບຮັກສາ, ສະສົມປຶ້ມກົດໝາຍ, ສິ່ງພິມອື່ນທີ່ບັນຈຸຄວາມຮູ້ກ່ຽວກັບກົດໝາຍ ເພື່ອສະໜອງ ແລະ ໃຫ້ການບໍລິການ ຂໍ້ມູນ ຂ່າວສານດ້ານກົດໝາຍໃຫ້ແກ່ປະຊາຊົນທຸກຊັ້ນຄົນ ພາຍໃນບ້ານ;
9. **ຈົດໝາຍເຫດທາງລັດຖະການ** ໝາຍເຖິງ ເອກະສານທາງການຂອງລັດຖະບານ ທີ່ເປັນບ່ອນລົງນິຕິກຳທີ່ໄດ້ປະກາດໃຊ້ແລ້ວ ເພື່ອໃຫ້ສາທາລະນະຊົນ ຮັບຮູ້ ແລະ ປະຕິບັດ;
10. ເວັບໄຊ ໝາຍເຖິງ ລະບົບຂໍ້ມູນ ຂ່າວສານ ທີ່ສ້າງຂຶ້ນເປັນໜ້າໜຶ່ງ ຫຼື ຫຼາຍໜ້າ ທີ່ເປັນຮູບແບບເອເລັກໂຕຣນິກໃນລະບົບອິນເຕີເນັດ;

11. ອິນເຕີເນັດ ໝາຍເຖິງ ລະບົບເຄືອຂ່າຍຄອມພິວເຕີ ຊຶ່ງສາມາດສົ່ງຂໍ້ມູນ ຂ່າວສານຫາກັນ ຫຼື ສື່ສານທາງເອເລັກໂຕຣນິກ ດ້ວຍການສົ່ງສັນຍານສຽງ ແລະ ພາບຫາກັນທາງສາຍ ຫຼື ທາງອາກາດ, ຂໍ້ມູນຂ່າວສານ ທີ່ສ້າງຂຶ້ນ ສາມາດຝາກໄວ້ໃນຖານຂໍ້ມູນ;
12. **ຖານຂໍ້ມູນ** ໝາຍເຖິງ ຊຸດຂໍ້ມູນ ທີ່ໄດ້ສ້າງຂຶ້ນຢູ່ໃນລະບົບເອເລັກໂຕຣນິກ ຊຶ່ງສາມາດເຂົ້າເຖິງໄດ້ດ້ວຍຫຼາຍຮູບແບບ ແລະ ຫຼາຍວິທີ;
13. **ສະຖິຕິການໂຄສະນາເຜີຍແຜ່ນິຕິກຳ** ໝາຍເຖິງ ຂໍ້ມູນ ແລະ ຕົວເລກ ທີ່ສ່ອງແສງເຖິງສະພາບຕົວຈິງໃນການໂຄສະນາເຜີຍແຜ່ນິຕິກຳຂອງແຕ່ລະຂະແໜງການ ເປັນຕົ້ນ ຈຳນວນຄັ້ງການໂຄສະນາເຜີຍແຜ່ນິຕິກຳ, ຜູ້ເຂົ້າຮ່ວມ, ການແຈກຢາຍປຶ້ມກົດໝາຍ;
14. **ການສະໜອງຂໍ້ມູນ ຂ່າວສານດ້ານກົດໝາຍ** ໝາຍເຖິງ ການໃຫ້ຂໍ້ມູນ ຂ່າວສານທາງດ້ານນິຕິກຳດ້ວຍການ ໃຫ້ອ່ານ, ຈົດບັນທຶກ ຫຼື ສຳເນົາເອົາເນື້ອໃນ ນິຕິກຳ;
15. **ການປະເມີນຜົນ** ໝາຍເຖິງ ການຕີລາຄາ ແລະ ປະເມີນຜົນ ຕາມມາດຕະຖານຂອງການປະເມີນຜົນແລະ ຜົນສຳເລັດ ໃນການຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ນິຕິກຳ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ**

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ວຽກງານໂຄສະນາເຜີຍແຜ່ນິຕິກຳ ດ້ວຍການວາງນະໂຍບາຍ, ກຳນົດລະບຽບການ, ສະໜອງງົບປະມານ, ວັດຖຸປະກອນ ແລະ ບຸກຄະລາກອນ ເຂົ້າໃນວຽກງານດັ່ງກ່າວ.

ລັດ ສົ່ງເສີມການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ພົນລະເມືອງ ໄດ້ຮັບຮູ້, ເຂົ້າໃຈ ຢ່າງທົ່ວເຖິງ ພ້ອມທັງເປັນການປູກຈິດສຳນຶກໃຫ້ເຄົາລົບ ແລະ ປະຕິບັດກົດໝາຍ, ຮັບປະກັນການເຂົ້າເຖິງກົດໝາຍ ດ້ວຍຫຼາຍຮູບການ ແລະ ວິທີການ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ໃຫ້ປະກອບສ່ວນເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ.

ລັດ ສົ່ງເສີມການປູກຈິດສຳນຶກ ການເຄົາລົບກົດໝາຍ ໃຫ້ແກ່ ນັກຮຽນ, ນັກສຶກສາ ໂດຍຫັນເປັນຫຼັກສູດການຮຽນ-ການສອນ ຂອງລະບົບການສຶກສາແຕ່ລະຂັ້ນ.

**ມາດຕາ 5 ຫຼັກການໂຄສະນາເຜີຍແຜ່ນິຕິກຳ**

ການໂຄສະນາເຜີຍແຜ່ນິຕິກຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງກັບ ລັດຖະທຳມະນູນ ແລະ ກົດໝາຍ;
2. ສະເໝີພາບຕໍ່ໜ້າກົດໝາຍ;
3. ຮັບປະກັນການຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
4. ດຳເນີນຢ່າງກວ້າງຂວາງ, ເລິກເຊິ່ງ, ມີຈຸດສຸມ, ເປັນລະບົບຕໍ່ເນື່ອງ ໂດຍຜ່ານຫຼາຍຮູບການ, ວິທີການ;
5. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ;
6. ຮັບປະກັນຄວາມຍຸຕິທຳ ແລະ ຜົນປະໂຫຍດສູງສຸດຂອງລັດ, ລວມໝູ່ ແລະ ພົນລະເມືອງ.

**ມາດຕາ 6 ສິດໄດ້ຮັບຂໍ້ມູນ ຂ່າວສານດ້ານນິຕິກຳ**

ພົນລະເມືອງທຸກຄົນ ມີສິດໄດ້ຮັບຂໍ້ມູນ ຂ່າວສານ, ຊອກຮູ້ຮ່ຳຮຽນ, ເຂົ້າຮ່ວມກິດຈະກຳກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ ເພື່ອສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 7 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ຊຸກຍູ້, ສົ່ງເສີມ ການພົວພັນຮ່ວມມືກັບສາກົນ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຍົກລະດັບວິຊາສະເພາະ, ຄວາມຮູ້ ແລະ ຄວາມສາມາດ ຂອງພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ.

## ໝວດທີ 2
## ເນື້ອໃນ ແລະ ຮູບການໂຄສະນາເຜີຍແຜ່ນິຕິກຳ

**ມາດຕາ 9 ເນື້ອໃນທີ່ນຳໃຊ້ໃນການໂຄສະນາເຜີຍແຜ່ນິຕິກຳ**

ເນື້ອໃນ ທີ່ນຳໃຊ້ໃນການໂຄສະນາເຜີຍແຜ່ນິຕິກຳ ປະກອບດ້ວຍ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ລວມທັງສົນທິສັນຍາ ແລະ ສັນຍາສາກົນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງແຕ່ລະຂະແໜງການ.

ເນື້ອໃນ ທີ່ຈະນຳໄປໂຄສະນາເຜີຍແຜ່ນັ້ນ ຕ້ອງໃຫ້ແທດເໝາະກັບເປົ້າໝາຍ ແລະ ຈຸດພິເສດ ຂອງແຕ່ລະທ້ອງຖິ່ນ.

**ມາດຕາ 10 ຮູບການໂຄສະນາເຜີຍແຜ່ນິຕິກຳ**

ການໂຄສະນາເຜີຍແຜ່ນິຕິກຳ ມີ ຮູບການພື້ນຖານ ດັ່ງນີ້:

1. ການໂຄສະນາເຜີຍແຜ່ນິຕິກຳທາງປາກເປົ່າ;
2. ການໂຄສະນາເຜີຍແຜ່ນິຕິກຳຜ່ານສື່ມວນຊົນ;
3. ການໂຄສະນາເຜີຍແຜ່ນິຕິກຳຜ່ານການພິມປຶ້ມກົດໝາຍ;
4. ການໂຄສະນາເຜີຍແຜ່ນິຕິກຳຜ່ານການສຶກສາ ຢູ່ໃນສະຖານການສຶກສາ;
5. ການໂຄສະນາເຜີຍແຜ່ນິຕິກຳຜ່ານການທົດສອບຄວາມຮູ້ດ້ານກົດໝາຍ;
6. ການໂຄສະນາເຜີຍແຜ່ນິຕິກຳຜ່ານການນຳໃຊ້ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ;
7. ການໂຄສະນາເຜີຍແຜ່ນິຕິກຳຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍ;
8. ການໂຄສະນາເຜີຍແຜ່ນິຕິກຳຜ່ານການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການແກ້ໄຂຄຳຮ້ອງທຸກ;
9. ການໂຄສະນາເຜີຍແຜ່ນິຕິກຳຜ່ານວັດທະນະທຳ ແລະ ສິລະປະ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ສາມາດນຳໃຊ້ຮູບການໂຄສະນາເຜີຍແຜ່ນິຕິກຳ ໃຫ້ເໝາະສົມກັບສະພາບ ແລະ ຈຸດພິເສດຂອງຂະແໜງການຕົນ.

**ມາດຕາ 11 ການໂຄສະນາເຜີຍແຜ່ນິຕິກຳທາງປາກເປົ່າ**

ການໂຄສະນາເຜີຍແຜ່ນິຕິກຳທາງປາກເປົ່າ ແມ່ນ ການເວົ້າໂດຍກົງ ຂອງພະນັກງານໂຄສະນາເຜີຍແຜ່ນິຕິກຳ ຕໍ່ຜູ້ຟັງ ກ່ຽວກັບເນື້ອໃນ ຫຼື ບັນຫາໃດໜຶ່ງຂອງລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແນໃສ່ຍົກສູງ ຄວາມຮູ້, ຄວາມເຂົ້າໃຈ, ຄວາມເຊື່ອໝັ້ນຕໍ່ນິຕິກຳ ແລະ ຊຸກຍູ້ໃຫ້ຜູ້ຟັງ ເຄື່ອນໄຫວຕາມຈຸດປະສົງຂອງນິຕິກຳ.

**ມາດຕາ 12 ການໂຄສະນາເຜີຍແຜ່ນິຕິກຳຜ່ານສື່ມວນຊົນ**

ການໂຄສະນາເຜີຍແຜ່ນິຕິກຳຜ່ານສື່ມວນຊົນ ແມ່ນ ການນຳເອົາ ຂໍ້ມູນ ຂ່າວສານທາງດ້ານກົດໝາຍ ບັນຈຸເຂົ້າໃນສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ ເພື່ອເຮັດໃຫ້ພົນລະເມືອງ ສາມາດເຂົ້າເຖິງກົດໝາຍໄດ້ງ່າຍ, ສະດວກ ແລະ ວ່ອງໄວ.

ອົງການສື່ມວນຊົນ ຕ້ອງສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແຕ່ລະຂະແໜງການ ໃນການໂຄສະນາເຜີຍແຜ່ນິຕິກຳ ຜ່ານພາຫະນະສື່ມວນຊົນ ເປັນຕົ້ນ ໜັງສືພິມ, ວາລະສານ, ແຜ່ນພັບ, ວິທະຍຸ, ໂທລະພາບ, ໂທລະໂຄ່ງ, ເວັບໄຊ, ສື່ແບບໃໝ່ ແລະ ສື່ອື່ນ.

**ມາດຕາ 13 ການໂຄສະນາເຜີຍແຜ່ນິຕິກຳຜ່ານການພິມປຶ້ມກົດໝາຍ**

ການໂຄສະນາເຜີຍແຜ່ນິຕິກຳຜ່ານການພິມປຶ້ມກົດໝາຍ ແມ່ນ ການນຳເອົານິຕິກຳຕົ້ນສະບັບ ມາຈັດພິມເປັນປຶ້ມ ເປັນຕົ້ນ ປຶ້ມກົດໝາຍ, ສັງລວມກົດໝາຍ, ປະມວນກົດໝາຍ, ແລະ ປຶ້ມນິຕິກຳໃຕ້ກົດໝາຍອື່ນ ເພື່ອແຈກຢາຍ, ຈຳໜ່າຍ, ນຳໃຊ້ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ, ການສຶກສາ ຄົ້ນຄວ້າ, ການຈັດຝຶກອົບຮົມ ແລະ ອື່ນໆ.

ສຳລັບ ຮູບແບບ, ຂະໜາດ, ສີ, ເນື້ອໃນ, ຂັ້ນຕອນ ການຂໍອະນຸຍາດຈັດພິມປຶ້ມກົດໝາຍ ໃຫ້ປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການຄຸ້ມຄອງການຈັດພິມປຶ້ມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 14 ການໂຄສະນາເຜີຍແຜ່ນິຕິກຳຜ່ານການສຶກສາຢູ່ໃນສະຖານການສຶກສາ**

ການໂຄສະນາເຜີຍແຜ່ນິຕິກຳຜ່ານການສຶກສາຢູ່ໃນສະຖານການສຶກສາ ແມ່ນ ການຊີ້ແຈງ, ອະທິບາຍ ຫຼື ບັນລະຍາຍ ເນື້ອໃນນິຕິກຳ ໃຫ້ແກ່ນັກຮຽນ, ນັກສຶກສາ ໂດຍຜ່ານການຮຽນ-ການສອນ ຢ່າງເປັນລະບົບ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຕ້ອງຄົ້ນຄວ້າ ແລະ ນຳສະເໜີນິຕິກຳທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕໍ່ກະຊວງສຶກສາທິການ ແລະ ກິລາ ເພື່ອບັນຈຸເຂົ້າໃນຫຼັກສູດການຮຽນ-ການສອນ ຂອງສາຍສາມັນສຶກສາ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.

ມາດຕາ 15 ການໂຄສະນາເຜີຍແຜ່ນິຕິກຳຜ່ານການທົດສອບຄວາມຮູ້ດ້ານກົດໝາຍ

ການໂຄສະນາເຜີຍແຜ່ນິຕິກຳຜ່ານການທົດສອບຄວາມຮູ້ດ້ານກົດໝາຍ ແມ່ນ ການຈັດກິດຈະກຳຕ່າງໆ ເພື່ອທົດສອບຄວາມຮູ້ດ້ານກົດໝາຍ ໂດຍອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ ແລະ ເອກະຊົນ ຊຶ່ງໃຫ້ຜູ້ທີ່ມີຄວາມສົນໃຈ ຕອບເປັນລາຍລັກອັກສອນ ຫຼື ປາກເປົ່າ ກ່ຽວກັບກົດໝາຍ ໃດໜຶ່ງ ແນໃສ່ ຊຸກຍູ້, ສົ່ງເສີມ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບກົດໝາຍ ໃຫ້ແກ່ພົນລະເມືອງ.

ມາດຕາ 16 ການໂຄສະນາເຜີຍແຜ່ນິຕິກຳຜ່ານການນຳໃຊ້ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ

ການໂຄສະນາເຜີຍແຜ່ນິຕິກຳຜ່ານການນຳໃຊ້ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ ແມ່ນ ການປະກອບນິຕິກຳ ເຂົ້າໃສ່ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ ເພື່ອສະໜອງຂໍ້ມູນ ຂ່າວສານດ້ານກົດໝາຍ ໃຫ້ແກ່ພົນລະເມືອງ ໄດ້ຄົ້ນຄວ້າ ແລະ ນຳໃຊ້ ຢ່າງທົ່ວເຖິງ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຕ້ອງເປັນເຈົ້າການ ແລະ ປະສານສົມທົບກັບອົງການປົກຄອງຂັ້ນທ້ອງຖິ່ນ ສະໜອງຂໍ້ມູນ ຂ່າວສານດ້ານກົດໝາຍ ໃສ່ຕູ້ປຶ້ມກົດໝາຍປະຈຳບ້ານ ແລະ ຫໍສະໝຸດ ຢ່າງເປັນລະບົບ.

ຂະແໜງການຍຸຕິທຳ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງ, ຄຸ້ມຄອງ ແລະ ນຳໃຊ້ຕູ້ປຶ້ມກົດໝາຍປະຈຳບ້ານ.

ມາດຕາ 17 ການໂຄສະນາເຜີຍແຜ່ນິຕິກຳຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍ

ການໂຄສະນາເຜີຍແຜ່ນິຕິກຳຜ່ານການໃຫ້ຄຳປຶກສາທາງດ້ານກົດໝາຍ ແມ່ນ ການຕອບຂໍ້ຂ້ອງໃຈ, ໃຫ້ຄຳປຶກສາ ແລະ ແນະນຳ ກົດໝາຍ ທາງປາກເປົ່າ ຫຼື ເປັນລາຍລັກອັກສອນ ກ່ຽວກັບ ຫຼັກການ, ລະບຽບການ, ມາດຕະການຂອງກົດໝາຍ ໃຫ້ແກ່ຜູ້ຮ້ອງຂໍ ຫຼື ສະເໜີຂໍຄຳປຶກສາທາງດ້ານກົດໝາຍ ໄດ້ຮັບຮູ້ ແລະ ເຂົ້າໃຈກົດໝາຍ, ຊ່ວຍໃຫ້ປະຊາຊົນ ສາມາດເຂົ້າເຖິງ ແລະ ນຳໃຊ້ກົດໝາຍ ເຂົ້າໃນພຶດຕິກຳຕົວຈິງ ໄດ້ຢ່າງຖືກຕ້ອງ.

ມາດຕາ 18 ການໂຄສະນາເຜີຍແຜ່ນິຕິກຳຜ່ານການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການແກ້ໄຂຄຳຮ້ອງທຸກ

ການໂຄສະນາເຜີຍແຜ່ນິຕິກຳຜ່ານການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການແກ້ໄຂຄຳຮ້ອງທຸກ ແມ່ນ ການສຶກສາອົບຮົມ, ຕອບຂໍ້ຂ້ອງໃຈ, ໃຫ້ຄຳປຶກສາ, ແນະນຳ ຫຼື ສະໜອງຄວາມຮູ້ກ່ຽວກັບກົດໝາຍ ໃຫ້ແກ່ຄູ່ກໍລະນີທີ່ຂັດແຍ່ງກັນ ໂດຍຜ່ານການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການແກ້ໄຂຄຳຮ້ອງທຸກ ແນໃສ່ເຮັດໃຫ້ເຂົາເຈົ້າມີຄວາມຮັບຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ.

ມາດຕາ 19 ການໂຄສະນາເຜີຍແຜ່ນິຕິກຳຜ່ານວັດທະນະທຳ ແລະ ສິລະປະ

ການໂຄສະນາເຜີຍແຜ່ນິຕິກຳຜ່ານວັດທະນະທຳ ແລະ ສິລະປະ ແມ່ນ ການນຳເອົາເນື້ອໃນຂອງກົດໝາຍ ເຂົ້າສູ່ຊີວິດສັງຄົມ ໂດຍຜ່ານວັດທະນະທຳ ແລະ ສິລະປະ ເປັນຕົ້ນ ການສະແດງລະຄອນ, ບົດກາບກອນ ຂັບລຳ, ບົດເພງ ແລະ ຮູບພາບ.

ການໂຄສະນາເຜີຍແຜ່ນິຕິກຳຜ່ານວັດທະນະທຳ ແລະ ສິລະປະ ຕ້ອງປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການຍຸຕິທຳ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ.

## ໝວດທີ 3
## ເປົ້າໝາຍໂຄສະນາເຜີຍແຜ່ນິຕິກຳ

**ມາດຕາ 20 ເປົ້າໝາຍໂຄສະນາເຜີຍແຜ່ນິຕິກຳ**

ເປົ້າໝາຍໂຄສະນາເຜີຍແຜ່ນິຕິກຳ ມີ ດັ່ງນີ້:

1. ປະຊາຊົນບັນດາເຜົ່າ;
2. ພະນັກງານ-ລັດຖະກອນ;
3. ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ພະສົງ, ສາມະເນນ, ນັກບວດ;
5. ຄົນຕ່າງປະເທດ ແລະ ຄົນລາວທີ່ອາໄສຢູ່ຕ່າງປະເທດ;
6. ນັກຮຽນ, ນັກສຶກສາ;
7. ນັກທຸລະກິດ;
8. ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ;
9. ຄົນພິການ;
10. ຜູ້ຖືກເຄາະຮ້າຍ;
11. ຜູ້ທີ່ລະເມີດກົດໝາຍຢູ່ບ້ານ;
12. ຜູ້ຖືກຫາ, ນັກໂທດ ຢູ່ສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງ.

**ມາດຕາ 21 ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ປະຊາຊົນບັນດາເຜົ່າ**

ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ປະຊາຊົນບັນດາເຜົ່າ ໃນເຂດຕົວເມືອງ, ເຂດຊົນນະບົດ, ພູດອຍ ແລະ ຫ່າງໄກສອກຫຼີກ ຕ້ອງສຸມໃສ່ ສຶກສາອົບຮົມໃຫ້ຮັບຮູ້ ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ລວມທັງສົນທິສັນຍາ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງກັບປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນແຕ່ລະທ້ອງຖິ່ນ ໂດຍນຳໃຊ້ເນື້ອໃນ, ຮູບການ, ວິທີການໂຄສະນາເຜີຍແຜ່ນິຕິກຳຕາມຄວາມເໝາະສົມ, ແທດເໝາະກັບ ອາຍຸ ແລະ ລະດັບຄວາມຮັບຮູ້ຂອງເປົ້າໝາຍ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງສ້າງເງື່ອນໄຂ ອຳນວຍຄວາມສະດວກ ພ້ອມທັງໂຄສະນາເຜີຍແຜ່ນິຕິກຳ ໃຫ້ແກ່ປະຊາຊົນບັນດາເຜົ່າ ຢູ່ເຂດຕົວເມືອງ, ຊົນນະບົດ, ພູດອຍ ແລະ ຫ່າງໄກສອກຫຼີກ.

ອົງການປົກຄອງບ້ານ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ປະຊາຊົນພາຍໃນບ້ານຂອງຕົນ.

**ມາດຕາ 22 ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ພະນັກງານ-ລັດຖະກອນ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງໂຄສະນາເຜີຍແຜ່ນິຕິກຳກ່ຽວກັບພະນັກງານ-ລັດຖະກອນ, ການເຄື່ອນໄຫວວຽກງານໃນຂະແໜງການຂອງຕົນ ພ້ອມທັງສະໜອງຂໍ້ມູນ ຂ່າວສານດ້ານກົດໝາຍ, ການສຳມະນາຫົວຂໍ້ກົດໝາຍ ແລະ ອື່ນໆ ໃຫ້ແກ່ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

ອົງການຈັດຕັ້ງລັດແຕ່ລະຂັ້ນ ຕ້ອງສ້າງເງື່ອນໄຂ ອໍານວຍຄວາມສະດວກໃຫ້ແກ່ພະນັກງານ-ລັດຖະກອນ ເຂົ້າເຖິງແຫຼ່ງຂໍ້ມູນ ຂ່າວສານດ້ານກົດໝາຍ ຢ່າງເປັນປົກກະຕິ ແລະ ທັນເວລາ.

**ມາດຕາ 23 ການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ການໂຄສະນາເຜີຍແຜ່ນິຕິກໍາ ໃຫ້ແກ່ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງສຸມໃສ່ ນິຕິກໍາ ທີ່ກ່ຽວຂ້ອງກັບກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຕົ້ນ ກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ, ປະມວນກົດໝາຍແພ່ງ, ປະມວນກົດໝາຍອາຍາ ແລະ ນິຕິກໍາໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ຄະນະບັນຊາກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແຕ່ລະຂັ້ນ ມີຄວາມຮັບຜິດຊອບໃນການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕໍາຫຼວດ ທີ່ຢູ່ໃຕ້ການບັງຄັບບັນຊາຂອງຕົນ.

**ມາດຕາ 24 ການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ພະສົງ, ສາມະເນນ, ນັກບວດ**

ການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ພະສົງ, ສາມະເນນ, ນັກບວດ ຕ້ອງສຸມໃສ່ ນິຕິກໍາ ທີ່ກ່ຽວຂ້ອງກັບພະສົງ, ສາມະເນນ, ນັກບວດ ເປັນຕົ້ນ ປະມວນກົດໝາຍແພ່ງ, ປະມວນກົດໝາຍອາຍາ ແລະ ນິຕິກໍາໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ແນວລາວສ້າງຊາດ ແຕ່ລະຂັ້ນ ມີຄວາມຮັບຜິດຊອບໃນການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ ພະສົງ, ສາມະເນນ, ນັກບວດ ທີ່ຢູ່ໃຕ້ການຄຸ້ມຄອງຂອງຕົນ.

**ມາດຕາ 25 ການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ຄົນຕ່າງປະເທດ ແລະ ຄົນລາວທີ່ອາໄສຢູ່ຕ່າງປະເທດ**

ການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ຄົນຕ່າງປະເທດ ແລະ ຄົນລາວທີ່ອາໄສຢູ່ຕ່າງປະເທດ ຕ້ອງສຸມໃສ່ນິຕິກໍາ ທີ່ກ່ຽວຂ້ອງກັບຄົນຕ່າງປະເທດ ແລະ ຄົນລາວທີ່ອາໄສຢູ່ຕ່າງປະເທດ ເປັນຕົ້ນ ປະມວນກົດໝາຍແພ່ງ, ປະມວນກົດໝາຍອາຍາ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ນິຕິກໍາໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ຂະແໜງການຕ່າງປະເທດ ມີຄວາມຮັບຜິດຊອບໃນການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ ຄົນຕ່າງປະເທດ ແລະ ຄົນລາວທີ່ອາໄສຢູ່ຕ່າງປະເທດ.

**ມາດຕາ 26 ການໂຄສະນາເຜີຍແຜ່ນິຕິກໍາໃຫ້ແກ່ນັກຮຽນ, ນັກສຶກສາ**

ການໂຄສະນາເຜີຍແຜ່ນິຕິກໍາ ສໍາລັບສາຍສາມັນສຶກສາ ຊັ້ນປະຖົມສຶກສາ ຕ້ອງສຸມໃສ່ນໍາເອົາຂໍ້ມູນຂ່າວສານດ້ານກົດໝາຍ ເປັນຕົ້ນ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ນິຕິກໍາໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ການໂຄສະນານິຕິກໍາ ສໍາລັບສາຍສາມັນສຶກສາ ຊັ້ນມັດທະຍົມ ຕອນຕົ້ນ, ຕອນປາຍ ຕ້ອງສຸມໃສ່ນໍາເອົາຂໍ້ມູນ ຂ່າວສານດ້ານກົດໝາຍ ເປັນຕົ້ນ ລັດຖະທໍາມະນູນ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍວ່າດ້ວຍຢາເສບຕິດ, ກົດໝາຍວ່າດ້ວຍການດໍາເນີນຄະດີເດັກ, ກົດໝາຍວ່າດ້ວຍການຈະລາຈອນທາງບົກ ແລະ ນິຕິກໍາໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ການໂຄສະນາເຜີຍແຜ່ນິຕິກໍາ ສໍາລັບສາຍອາຊີວະສຶກສາ ແລະ ສາຍການສຶກສາຊັ້ນສູງ ຕ້ອງສຸມໃສ່ນິຕິກໍາທີ່ກ່ຽວຂ້ອງ ໃນແຕ່ລະໄລຍະ ມາໂຄສະນາເຜີຍແຜ່ໃຫ້ແກ່ນັກຮຽນ, ນັກສຶກສາ.

ສະຖານການສຶກສາທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບໃນການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ ນັກຮຽນ, ນັກສຶກສາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 27 ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ນັກທຸລະກິດ

ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ນັກທຸລະກິດ ຕ້ອງສຸມໃສ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ.

ນັກທຸລະກິດ ຕ້ອງເປັນເຈົ້າການ ເຂົ້າຮ່ວມ ແລະ ປະກອບສ່ວນໃນການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ.

ສະພາການຄ້າ ແລະ ອຸດສາຫະກຳ ແຕ່ລະຂັ້ນ, ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຈັດຕັ້ງໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ນັກທຸລະກິດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

### ມາດຕາ 28 ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ

ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ໃນຫົວໜ່ວຍແຮງງານ ຕ້ອງສຸມໃສ່ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ, ຄວາມປອດໄພໃນສະຖານທີ່ເຮັດວຽກ, ການເຮັດວຽກເພີ່ມໂມງ, ລະບົບເງິນເດືອນ, ການປະກັນສັງຄົມ, ການປະກັນສຸຂະພາບ, ການເຮັດສັນຍາແຮງງານ, ການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍກຳມະບານລາວ, ກົດໝາຍວ່າດ້ວຍການປະກັນສັງຄົມ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຫະພັນກຳມະບານລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີໜ້າທີ່ຮັບຜິດຊອບ ຊຸກຍູ້ ແລະ ສົ່ງເສີມ ສ້າງເງື່ອນໄຂ ໃຫ້ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານໄດ້ຮຽນຮູ້ ແລະ ເຂົ້າເຖິງກົດໝາຍ.

### ມາດຕາ 29 ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຄົນພິການ

ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຄົນພິການ ຕ້ອງສຸມໃສ່ ນິຕິກຳທີ່ກ່ຽວຂ້ອງກັບສິດຂອງຄົນພິການ, ນະໂຍບາຍຂອງລັດ, ຄວາມຮັບຜິດຊອບຂອງລັດ ແລະ ສັງຄົມ ໃນການປະກອບອາຊີບ, ຊ່ວຍເຫຼືອຄົນພິການ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຕ້ອງເປັນເຈົ້າການ ປະສານສົມທົບກັບ ກະຊວງການອື່ນທີ່ກ່ຽວຂ້ອງ, ຄະນະກຳມະການແຫ່ງຊາດເພື່ອຄົນພິການ ແລະ ຜູ້ອາຍຸສູງ, ການຈັດຕັ້ງທີ່ເປັນຕົວແທນຂອງຄົນພິການ ແລະ ການຈັດຕັ້ງອື່ນ ແຕ່ສູນກາງລົງຮອດທ້ອງຖິ່ນ ເພື່ອຈັດຕັ້ງການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຄົນພິການ.

### ມາດຕາ 30 ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ຖືກເຄາະຮ້າຍ

ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ຖືກເຄາະຮ້າຍ ເປັນຕົ້ນ ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງໃນຄອບຄົວ, ການຄ້າມະນຸດ, ການລະເມີດທາງເພດ ແລະ ການເສບຢາເສບຕິດ ຕ້ອງສຸມໃສ່ບັນດານິຕິກຳທີ່ກ່ຽວຂ້ອງ ເພື່ອຊ່ວຍເຫຼືອ, ແນະນຳ ແລະ ສະໜອງຂໍ້ມູນ ຂ່າວສານດ້ານກົດໝາຍ ໃຫ້ແກ່ເຂົາເຈົ້າ.

ບັນດາຂະແໜງການທີ່ກ່ຽວຂ້ອງ ຕ້ອງເປັນເຈົ້າການຈັດຕັ້ງໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ຖືກເຄາະຮ້າຍ ເປັນປົກກະຕິ.

**ມາດຕາ 31 ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ລະເມີດກົດໝາຍຢູ່ບ້ານ**

ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ລະເມີດກົດໝາຍຢູ່ບ້ານ ຕ້ອງສຸມໃສ່ ກົດໝາຍທີ່ຕິດພັນກັບການກະທຳຜິດຂອງເປົ້າໝາຍ ເປັນຕົ້ນ ປະມວນກົດໝາຍອາຍາ, ປະມວນກົດໝາຍແພ່ງ, ກົດໝາຍວ່າດ້ວຍຢາເສບຕິດ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ອົງການປົກຄອງບ້ານ ມີຄວາມຮັບຜິດຊອບ ໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ລະເມີດກົດໝາຍ ທີ່ດຳລົງຊີວິດຢູ່ໃນຂອບເຂດບ້ານຂອງຕົນ.

**ມາດຕາ 32 ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ຖືກຫາ, ນັກໂທດ ຢູ່ສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງ**

ການໂຄສະນາເຜີຍແຜ່ນິຕິກຳໃຫ້ແກ່ຜູ້ຖືກຫາ, ນັກໂທດ ຢູ່ສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງ ຕ້ອງສຸມໃສ່ ກົດໝາຍທີ່ກ່ຽວຂ້ອງກັບຜູ້ຖືກຫາ ຫຼື ນັກໂທດ ເປັນຕົ້ນ ປະມວນກົດໝາຍອາຍາ, ປະມວນກົດໝາຍແພ່ງ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍຢາເສບຕິດ, ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ເຈົ້າໜ້າທີ່ຮັບຜິດຊອບສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງ ຕ້ອງເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງການໂຄສະນາເຜີຍແຜ່ນິຕິກຳ ໃຫ້ແກ່ຜູ້ຖືກຫາ, ນັກໂທດໃນສະຖານທີ່ດັ່ງກ່າວ.

## ໝວດທີ 4
## ພະນັກງານໂຄສະນາເຜີຍແຜ່ນິຕິກຳ

**ມາດຕາ 33 ພະນັກງານໂຄສະນາເຜີຍແຜ່ນິຕິກຳ**

ພະນັກງານໂຄສະນາເຜີຍແຜ່ນິຕິກຳ ແມ່ນ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ຈາກອົງການຮັບຜິດຊອບໂຄສະນາເຜີຍແຜ່ນິຕິກຳຂອງຕົນ ໃຫ້ເຄື່ອນໄຫວ ໂຄສະນາເຜີຍແຜ່, ຊີ້ແຈງ, ອະທິບາຍ ແລະ ແນະນຳເນື້ອໃນຂອງນິຕິກຳ ໃຫ້ແກ່ພົນລະເມືອງ.

ໃນກໍລະນີຈຳເປັນ ອົງການຮັບຜິດຊອບດັ່ງກ່າວອາດຈະແຕ່ງຕັ້ງຄະນະ ຫຼື ບຸກຄົນໃດໜຶ່ງ ເພື່ອເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳ ກໍໄດ້.

**ມາດຕາ 34 ມາດຕະຖານ ແລະ ເງື່ອນໄຂ**

ພະນັກງານໂຄສະນາເຜີຍແຜ່ນິຕິກຳ ຕ້ອງມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດດີ, ມີຈັນຍາບັນ, ມີຄວາມສັດຊື່ບໍລິສຸດຕໍ່ວິຊາຊີບ;
2. ມີຄວາມຮູ້ທາງດ້ານກົດໝາຍ ໃນລະດັບໃດໜຶ່ງທີ່ແນ່ນອນ ຫຼື ມີປະສົບການເຮັດວຽກກ່ຽວກັບກົດໝາຍຢ່າງໜ້ອຍ ໜຶ່ງ ປີ ແລະ ໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
3. ມີຄວາມຫ້າວຫັນ, ຕັ້ງໃຈ ກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
4. ຕ້ອງເປັນພົນລະເມືອງລາວ ແລະ ມີສຸຂະພາບແຂງແຮງດີ.

**ມາດຕາ 35 ສິດ ແລະ ໜ້າທີ່ ຂອງພະນັກງານໂຄສະນາເຜີຍແຜ່ນິຕິກຳ**

ພະນັກງານໂຄສະນາເຜີຍແຜ່ນິຕິກຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ສະເໜີແຜນການເຄື່ອນໄຫວ ໂຄສະນາເຜີຍແຜ່ນິຕິກຳ ທີ່ຕົນຮັບຜິດຊອບຕໍ່ຂັ້ນເທິງພິຈາລະນາ;
2. ຄົ້ນຄວ້າ, ກະກຽມເນື້ອໃນ, ຮູບການ, ວິທີການ ແລະ ເປົ້າໝາຍໂຄສະນາເຜີຍແຜ່ນິຕິກຳ;
3. ຄົ້ນຄວ້າ, ສ້າງ, ຜະລິດສື່ຕ່າງໆ ເພື່ອຮັບໃຊ້ໃຫ້ແກ່ການໂຄສະນາເຜີຍແຜ່ນິຕິກຳ;
4. ດຳເນີນການໂຄສະນາ, ອະທິບາຍ, ຕອບຂໍ້ຂ້ອງໃຈ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍ;
5. ເກັບກຳ ສະຖິຕິການໂຄສະນາເຜີຍແຜ່ນິຕິກຳ ໃນຄວາມຮັບຜິດຊອບຂອງຕົນ;
6. ໄດ້ຮັບການສະໜອງຂໍ້ມູນ ຂ່າວສານ ທາງດ້ານກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳ;
7. ໄດ້ຮັບການ ຝຶກອົບຮົມ, ຍົກລະດັບຄວາມຮູ້ທາງດ້ານກົດໝາຍ, ເຕັກນິກ, ທັກສະ ຂອງການໂຄສະນາເຜີຍແຜ່ນິຕິກຳໃນແຕ່ລະໄລຍະ ລວມທັງການແລກປ່ຽນບົດຮຽນ ທັງພາຍໃນ ແລະ ຕ່າງປະເທດ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
9. ຂໍທິດຊີ້ນຳ, ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ປະຈຳເດືອນ, ປະຈຳສາມ ເດືອນ, ປະຈຳ ຫົກ ເດືອນ ແລະ ປະຈຳປີ ໃຫ້ຂັ້ນເທິງຊາບ;
10. ໄດ້ຮັບນະໂຍບາຍ ຕາມລະບຽບການ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ອົງການທີ່ຮັບຜິດຊອບວຽກງານໂຄສະນາເຜີຍແຜ່ນິຕິກຳ

**ມາດຕາ 36 ອົງການຮັບຜິດຊອບວຽກງານໂຄສະນາເຜີຍແຜ່ນິຕິກຳ**

ອົງການຮັບຜິບຊອບວຽກງານໂຄສະນາເຜີຍແຜ່ນິຕິກຳ ມີ ສີ່ຂັ້ນ ຄື ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.

ຂັ້ນສູນກາງ ປະກອບດ້ວຍ ກະຊວງ, ອົງການຂັ້ນສູນກາງ.

ຂັ້ນແຂວງ ປະກອບດ້ວຍ ພະແນກ, ອົງການຂັ້ນແຂວງ.

ຂັ້ນເມືອງ ປະກອບດ້ວຍ ຫ້ອງການ, ອົງການຂັ້ນເມືອງ.

ຂັ້ນບ້ານ ແມ່ນ ອົງການປົກຄອງບ້ານ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງອົງການຮັບຜິດຊອບວຽກງານໂຄສະນາເຜີຍແຜ່ນິຕິກຳ**

ອົງການຮັບຜິດຊອບວຽກງານໂຄສະນາເຜີຍແຜ່ນິຕິກຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການ, ແຜນງານ, ໂຄງການ ລວມທັງແຜນງົບປະມານ ທີ່ນຳໃຊ້ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ ໃນຂະແໜງການຂອງຕົນ;
2. ຈັດຕັ້ງການໂຄສະນາເຜີຍແຜ່ນິຕິກຳ;

3. ນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ທີ່ກ້າວໜ້າ ແລະ ທັນສະໄໝ ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ;
4. ແຕ່ງຕັ້ງ ພະນັກງານໂຄສະນາເຜີຍແຜ່ນິຕິກຳ ໃນຂະແໜງການຂອງຕົນ;
5. ຄົ້ນຄວ້າ, ກວດແກ້, ຮຽບຮຽງ ເນື້ອໃນ, ກຳນົດຮູບການ, ເປົ້າໝາຍ ໃນການໂຄສະນາເຜີຍແຜ່ນິຕິກຳ;
6. ຈັດກອງປະຊຸມສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
7. ບຳລຸງ, ຍົກລະດັບຄວາມຮູ້ ຄວາມສາມາດ ໃຫ້ແກ່ພະນັກງານໂຄສະນາເຜີຍແຜ່ນິຕິກຳ;
8. ເກັບກຳສະຖິຕິ ແລະ ສະຫຼຸບ ລາຍງານ ການເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳ ປະຈຳເດືອນ, ປະຈຳ ສາມ ເດືອນ, ປະຈຳ ຫົກ ເດືອນ ແລະ ປະຈຳປີ ໃຫ້ຂັ້ນເທິງຂອງຕົນ ຮັບຊາບ ແລະ ລາຍງານປະຈຳເດືອນ, ປະຈຳ ສາມ ເດືອນ, ປະຈຳ ຫົກ ເດືອນ ແລະ ປະຈຳປີ ໃຫ້ຂະແໜງການຍຸຕິທຳ ສະເພາະການເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍ;
9. ພົວພັນຮ່ວມມື ກັບພາກສ່ວນທີ່ກ່ຽວຂ້ອງກັບວຽກງານໂຄສະນາເຜີຍແຜ່ນິຕິກຳ ທັງພາຍໃນ ແລະ ຕ່າງປະເທດ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 38 ຂໍ້ຫ້າມ ສຳລັບພະນັກງານໂຄສະນາເຜີຍແຜ່ນິຕິກຳ

ຫ້າມ ພະນັກງານໂຄສະນາເຜີຍແຜ່ນິຕິກຳ ມີ ພຶດຕິກຳ ດັ່ງນີ້:

1. ໂຄສະນາເຜີຍແຜ່ບິດເບືອນ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2. ໂຄສະນາແບ່ງແຍກຄວາມສາມັກຄີ, ເຈາະຈີ້ໃສ່ການຈັດຕັ້ງ ຫຼື ບຸກຄົນ;
3. ສະໜອງຂໍ້ມູນ ຂ່າວສານດ້ານກົດໝາຍ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ, ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ;
4. ສວຍໃຊ້ສິດ, ໜ້າທີ່ຂອງຕົນ ບັງຄັບ, ນາບຂູ່, ຮັບສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ ຫຼື ການຈັດຕັ້ງຂອງຕົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ເປີດເຜີຍຄວາມລັບຂອງຊາດ ແລະ ຄວາມລັບທາງລັດຖະການ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 39 ຂໍ້ຫ້າມ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຂັດຂວາງການເຄື່ອນໄຫວປະຕິບັດໜ້າທີ່ ຂອງພະນັກງານໂຄສະນາເຜີຍແຜ່ນິຕິກຳ ແລະ ແຊກແຊງເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ສ້າງ ແລະ ຜະລິດສື່ໂຄສະນາເຜີຍແຜ່ນິຕິກຳທຸກປະເພດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ພິມປຶ້ມກົດໝາຍ, ປະມວນກົດໝາຍ, ປຶ້ມສັງລວມກົດໝາຍ ແລະ ປຶ້ມນິຕິກຳອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງຍຸຕິທຳ;
4. ໃຊ້ຄວາມຮຸນແຮງ, ບັງຄັບ, ໃສ່ຮ້າຍປ້າຍສີ, ໝິ່ນປະໝາດ, ປ້ອຍດ່າ, ໃຊ້ຄວາມຫຍາບຊ້າ, ນາບຂູ່ ຫຼື ທຳຮ້າຍພະນັກງານໂຄສະນາເຜີຍແຜ່ນິຕິກຳ, ຜູ້ໃຫ້ຂໍ້ມູນ ຫຼື ບຸກຄົນທີ່ກ່ຽວຂ້ອງ;
5. ໃຫ້ສິນບົນແກ່ພະນັກງານໂຄສະນາເຜີຍແຜ່ນິຕິກຳ;
6. ປ່ຽນແປງ, ດັດແກ້ເນື້ອໃນກົດໝາຍ ແລະ ລະບຽບການ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ

**ມາດຕາ 40 ອົງການຄຸ້ມຄອງ ແລະ ກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ**

ລັດຖະບານ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງຍຸຕິທຳ ເປັນໃຈກາງ ແລະ ເປັນເຈົ້າການປະສານສົມທົບກັບບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການປົກຄອງທ້ອງຖິ່ນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ ມີດັ່ງນີ້:
1. ກະຊວງຍຸຕິທຳ;
2. ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ;
3. ຫ້ອງການຍຸຕິທຳ ເມືອງ, ເທດສະບານ, ນະຄອນ;
4. ອົງການປົກຄອງບ້ານ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ.**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:
1. ຄົ້ນຄວ້າ ນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
2. ຄົ້ນຄວ້າ ອອກລະບຽບການກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
3. ໂຄສະນາເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ດ້ວຍຮູບການຕ່າງໆ ພ້ອມທັງຊຸກຍູ້ ການຈັດຕັ້ງປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ;
4. ຄຸ້ມຄອງ ແລະ ຊີ້ນຳ ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ໃນຂອບເຂດທົ່ວປະເທດ;

5. ສ້າງ, ບຳລຸງ, ຍົກລະດັບ ວຽກງານໂຄສະນາເຜີຍແຜ່ນິຕິກຳ ແລະ ຈັນຍາບັນ ໃຫ້ແກ່ພະນັກງານ ໂຄສະນາເຜີຍແຜ່ນິຕິກຳ;
6. ຄົ້ນຄວ້າ, ກຳນົດມາດຕະຖານ ເຕັກນິກ ແລະ ນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ທີ່ກ້າວໜ້າ, ທັນສະໄໝ ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ;
7. ຄົ້ນຄວ້າ, ພິຈາລະນາ, ອະນຸຍາດຈັດພິມປຶ້ມກົດໝາຍ ຫຼື ໂຈະ ສື່ໂຄສະນາເຜີຍແຜ່ນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
8. ຄຸ້ມຄອງສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ເປັນໃຈກາງປະສານສົມທົບ ກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
10. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ໃນຂອບເຂດທົ່ວປະເທດ;
11. ເກັບກຳ ສະຖິຕິການໂຄສະນາເຜີຍແຜ່ກົດໝາຍ ຂອງກະຊວງ, ອົງການ ຢ່າງເປັນປົກກະຕິ;
12. ສ້າງ ແລະ ປັບປຸງຕາໜ່າງໂຄສະນາເຜີຍແຜ່ນິຕິກຳ ໃນຂອບເຂດທົ່ວປະເທດ;
13. ພົວພັນ ແລະ ຮ່ວມມື ກັບການຈັດຕັ້ງສາກົນ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
14. ປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆ ຕໍ່ພະນັກງານໂຄສະນາເຜີຍແຜ່ນິຕິກຳ;
15. ສະຫຼຸບ ລາຍງານ ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ກົດໝາຍ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງພະແນກຍຸຕິທຳ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີ ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບການພັດທະນາວຽກງານໂຄສະນາເຜີຍແຜ່ນິຕິກຳ ຂັ້ນແຂວງ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ແລະ ລາຍງານຕໍ່ລັດຖະມົນຕີ ກະຊວງຍຸຕິທຳ ເພື່ອຮັບຊາບ;
2. ຈັດຕັ້ງຜັນຂະຫຍາຍ ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ;
3. ນຳໃຊ້ວິທະຍາສາດ, ເຕັກໂນໂລຊີທີ່ກ້າວໜ້າ ແລະ ທັນສະໄໝ ເຂົ້າໃນການເຄື່ອນໄຫວວຽກງານເຜີຍແຜ່ນິຕິກຳ;
4. ຈັດຕັ້ງການໂຄສະນາເຜີຍແຜ່ນິຕິກຳ ພ້ອມທັງຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການໂດຍຜ່ານຮູບການຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ຄຸ້ມຄອງ ແລະ ຊີ້ນຳ ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ຂອງບັນດາຂະແໜງການຂັ້ນແຂວງ;

6. ສ້າງ, ບຳລຸງ, ຍົກລະດັບວຽກງານໂຄສະນາເຜີຍແຜ່ນິຕິກຳ ແລະ ຈັນຍາບັນ ໃຫ້ແກ່ພະນັກງານໂຄສະນາເຜີຍແຜ່ນິຕິກຳ ຂອງຂະແໜງການຕ່າງໆ ຂັ້ນແຂວງ ແລະ ຂັ້ນເມືອງ;
7. ເປັນໃຈກາງປະສານສົມທົບກັບບັນດາຂະແໜງການ ຂັ້ນແຂວງ ແລະ ຂັ້ນເມືອງ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
8. ຄົ້ນຄວ້າ, ພິຈາລະນາ ອະນຸຍາດ ຫຼື ໂຈະ ສື່ໂຄສະນາເຜີຍແຜ່ນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
9. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ເກັບກຳ ສະຖິຕິການໂຄສະນາເຜີຍແຜ່ກົດໝາຍ ຂອງພະແນກ, ອົງການ ຂັ້ນແຂວງ ພ້ອມທັງລາຍງານຕໍ່ອົງການປົກຄອງ ຂັ້ນແຂວງ ແລະ ລາຍງານຕໍ່ກະຊວງຍຸຕິທຳ ຢ່າງເປັນປົກກະຕິ;
11. ຄົ້ນຄວ້າ ສະເໜີ ສ້າງ ແລະ ປັບປຸງຕາໜ່າງໂຄສະນາເຜີຍແຜ່ນິຕິກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
12. ພົວພັນ ແລະ ຮ່ວມມືກັບອົງການຈັດຕັ້ງສາກົນ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ ຕາມການອະນຸມັດຂອງຂັ້ນເທິງ;
13. ສະເໜີການປະຕິບັດນະໂຍບາຍ ແລະ ມາດຕະການ ຕໍ່ພະນັກງານໂຄສະນາເຜີຍແຜ່ນິຕິກຳ ຕາມລະບຽບການ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງຫ້ອງການຍຸຕິທຳ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ ຫ້ອງການຍຸຕິທຳ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ;
2. ນຳໃຊ້ວິທະຍາສາດ, ເຕັກໂນໂລຊີທີ່ກ້າວໜ້າ ແລະ ທັນສະໄໝ ເຂົ້າໃນການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ;
3. ຈັດຕັ້ງການໂຄສະນາເຜີຍແຜ່ນິຕິກຳ ໂດຍຜ່ານຮູບການຕ່າງໆ ພ້ອມທັງຊຸກຍູ້ ການຈັດຕັ້ງໂຄສະນາເຜີຍແຜ່ນິຕິກຳ ເພື່ອສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຄຸ້ມຄອງ ແລະ ຊີ້ນຳ ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ຂອງບັນດາຂະແໜງການຂັ້ນເມືອງ ແລະ ຂັ້ນບ້ານ;
5. ບຳລຸງ ແລະ ຍົກລະດັບວຽກງານໂຄສະນາເຜີຍແຜ່ນິຕິກຳ ແລະ ຈັນຍາບັນ ໃຫ້ແກ່ພະນັກງານໂຄສະນາເຜີຍແຜ່ນິຕິກຳ ຂອງຂະແໜງການຕ່າງໆ ຂັ້ນເມືອງ ແລະ ຂັ້ນບ້ານ;
6. ເປັນໃຈກາງປະສານສົມທົບກັບ ບັນດາຂະແໜງການ ຂັ້ນເມືອງ ແລະ ຂັ້ນບ້ານ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
7. ຄົ້ນຄວ້າ, ພິຈາລະນາ ອະນຸຍາດ ຫຼື ໂຈະ ສື່ໂຄສະນາເຜີຍແຜ່ນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
8. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

9. ເກັບກຳ ສະຖິຕິການໂຄສະນາເຜີຍແຜ່ກົດໝາຍ ຂອງຫ້ອງການ, ອົງການ ຂັ້ນເມືອງ ພ້ອມທັງລາຍງານຕໍ່ອົງການປົກຄອງ ຂັ້ນເມືອງ ແລະ ລາຍງານຕໍ່ພະແນກຍຸຕິທຳ ຂັ້ນແຂວງ ຢ່າງເປັນປົກກະຕິ;
10. ຄົ້ນຄວ້າ ສະເໜີ ສ້າງ ແລະ ປັບປຸງ ຕາໜ່າງໂຄສະນາເຜີຍແຜ່ນິຕິກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
11. ສະເໜີການປະຕິບັດນະໂຍບາຍ ແລະ ມາດຕະການຕໍ່ພະນັກງານໂຄສະນາເຜີຍແຜ່ນິຕິກຳ ຕາມລະບຽບການ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານໂຄສະນາເຜີຍແຜ່ນິຕິກຳ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງການໂຄສະນາເຜີຍແຜ່ນິຕິກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຄຸ້ມຄອງ ແລະ ນຳໃຊ້ເຄື່ອງມື, ສື່ໂຄສະນາເຜີຍແຜ່ນິຕິກຳ ແລະ ຕູ້ປຶ້ມກົດໝາຍປະຈຳບ້ານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ມອບໝາຍໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ອົງການຈັດຕັ້ງອື່ນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳ;
4. ກະກຽມ, ກຳນົດເປົ້າໝາຍ ເພື່ອໂຄສະນາເຜີຍແຜ່ນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ປະເມີນຜົນ, ສັງລວມ ແລະ ເກັບກຳສະຖິຕິການໂຄສະນາເຜີຍແຜ່ນິຕິກຳ ເພື່ອລາຍງານຕໍ່ນາຍບ້ານ ແລະ ຫົວໜ້າຫ້ອງການຍຸຕິທຳຂັ້ນເມືອງ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການຍຸຕິທຳ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ການສ້າງແຜນ, ຈັດແບ່ງງົບປະມານ, ສະໜອງວັດຖຸປະກອນ, ພາຫະນະ ພ້ອມທັງຄຸ້ມຄອງ, ຊີ້ນຳ ນຳພາ, ຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ນິຕິກຳ ໃນຂະແໜງການຕົນ.

**ມາດຕາ 46 ເນື້ອໃນການກວດກາ**

ເນື້ອໃນການກວດກາ ວຽກງານໂຄສະນາເຜີຍແຜ່ນິຕິກຳ ມີດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວ ວຽກງານໂຄສະນາເຜີຍແຜ່ນິຕິກຳ;
3. ການໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະນັກງານໂຄສະນາເຜີຍແຜ່ນິຕິກຳ;
4. ການນຳໃຊ້ງົບປະມານ, ວັດຖຸປະກອນ, ພາຫະນະ ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ.

**ມາດຕາ 47 ຮູບການກວດກາ**

ການກວດກາ ການໂຄສະນາເຜີຍແຜ່ນິຕິກຳ ດຳເນີນດ້ວຍ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;
3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 48 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງໃນການເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳ, ອຳນວຍຄວາມສະດວກ, ໃຫ້ການຮ່ວມມື, ປະກອບສ່ວນດ້ານທຶນຮອນ, ວັດຖຸປະກອນ ເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 49 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງກັບວຽກງານໂຄສະນາເຜີຍແຜ່ນິຕິກຳ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 9
## ງົບປະມານ

### ມາດຕາ 50 ງົບປະມານ

ງົບປະມານ ທີ່ນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ແມ່ນໄດ້ມາຈາກງົບປະມານຂອງລັດ, ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງສັງຄົມ ແລະ ການໃຫ້ການສະໜັບສະໜູນຈາກອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

### ມາດຕາ 51 ການສ້າງແຜນງົບປະມານ

ກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງສ້າງແຜນ ແລະ ຈັດສັນງົບປະມານເຂົ້າໃນວຽກງານໂຄສະນາເຜີຍແຜ່ນິຕິກຳ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃນແຕ່ລະປີ ຢ່າງລະອຽດ ແລ້ວນຳສະເໜີຂັ້ນເທິງທີ່ກ່ຽວຂ້ອງ ພິຈາລະນາ.

### ມາດຕາ 52 ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ເຂົ້າໃນການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ນິຕິກຳ ຕ້ອງສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 53 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງຍຸຕິທຳ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 54 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ